ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດກາລັດຖະບານ ເລກທີ **419**/ອກລ

ນະຄອນຫຼວງວຽງຈັນ, ວັນທີ 4 ທັນວາ 2018

# ຄຳແນະນຳ

## ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ)

ພາຍຫຼັງ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VIII ໄດ້ອອກມະຕິຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 073/ສພຊ, ລົງວັນທີ 16 ພະຈິກ 2017, ປະທານປະ ເທດອອກລັດຖະດຳລັດປະກາດໃຊ້ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 328/ປປທ, ລົງວັນທີ 26 ທັນວາ 2017, ຊຶ່ງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 041/ສພຊ, ລົງວັນທີ 16 ພະຈິກ 2017 ປະກອບດ້ວຍ 10 ພາກ, 06 ໝວດ, 80 ມາດຕາ, ໄດ້ກຳນົດຫຼັກການ ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວກວດກາລັດ ເວົ້າລວມແມ່ນຄົບຖ້ວນ ແລະ ຈະແຈ້ງ ແຕ່ເນື້ອໃນທີ່ໄດ້ກຳ ນົດໄວ້ໃນບາງມາດຕາຂອງກົດໝາຍສະບັບນີ້ ບໍ່ສາມາດລະບຸລະອຽດໄດ້ຢ່າງຄົບຖ້ວນ.

ດັ່ງນັ້ນ, ປະທານ ອົງການກວດກາລັດຖະບານ ຈຶ່ງອອກຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ດັ່ງນີ້:

## I. ຈຸດປະສົງ

**1.** ເພື່ອຜັນຂະຫຍາຍເນື້ອໃນບາງມາດຕາທີ່ປັບປຸງ ແລະ ສ້າງໃໝ່ ຂອງກົດໝາຍ ວ່າດ້ວຍການກວດກາລັດ **(**ສະບັບປັບປຸງ**)** ໃຫ້ລະອຽດ, ຈະແຈ້ງ ແລະ ຮັດກຸມກວ່າເກົ່າ;

**2.** ເພື່ອແນະນຳ, ອະທິບາຍ ແລະ ຍົກຕົວຢ່າງໃຫ້ຂະແໜງການ, ທ້ອງຖິ່ນ ມີຄວາມເຂົ້າໃຈແຈ້ງ ແລະ ສະ ດວກໃນການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານກວດກາລັດ ຖືກຕ້ອງຮັດກຸມ, ເຂັ້ມງວດ, ມີຜົນສັກສິດຕາມກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໄດ້ກຳນົດໄວ້;

**3.** ເພື່ອໃຫ້ຄະນະນຳ ກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການກວດກາລັດແຕ່ລະຂັ້ນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພົນລະເມືອງ ມີຄວາມເຂົ້າໃຈທີ່ເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

## II. ແນະນໍາເພີ່ມເຕີມບາງເນື້ອໃນຂອງບາງມາດຕາທີ່ໄດ້ສ້າງໃໝ່ ແລະ ປັບປຸງ.

1. **ພາກທີ I ບົດບັນຍັດທົ່ວໄປ**

1.1. **ມາດຕາ 2** ຄ□າສັບທີ່ວ່າ: **ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ** ໝາຍເຖິງການຈັດຕັ້ງທີ່ນໍາ ພາ-ຄຸ້ມຄອງ ແລະ ການຈັດຕັ້ງທີ່ມີການພົວພັນສາຍຕັ້ງ, ສາຍຂວາງກັບເປົ້າໝາຍຖືກກວດກາ.

**ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແກ້ໄຂຜົນຂອງການກວດກາຕາມກົດໝາຍ** ໝາຍເຖິງການຍົກສູງຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ຂອງຜູ້ເປັນຫົວໜ້າ ຕໍ່ການແກ້ໄຂບັນຫາທີ່ການຈັດຕັ້ງ ແລະ ບຸກຄົນລະເມີດກົດໝາຍ, ລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍຄວາມເປັນເຈົ້າການ, ເຂັ້ມງວດ, ທັນເວລາ ແລະ ຖືກຕ້ອງ ຕາມການຕົກລົງແກ້ໄຂຜົນການກວດກາ.

ກໍລະນີ ການຕົກລົງແກ້ໄຂຜົນການກວດກາ ຫາກເກີນສິດແກ້ໄຂ ແລະ ການດໍາເນີນການກວດກາພົບເຫັນຫົວໜ້າອົງການມີການລະເມີດ ຫຼື ກ່ຽວຂ້ອງກັບການລະເມີດນັ້ນ ສິດໃນການແກ້ໄຂຕ້ອງແມ່ນຂັ້ນເທິງທີ່ມີສິດຄຸ້ມຄອງ ຫົວໜ້າອົງການນັ້ນເປັນຜູ້ແກ້ໄຂ ຫຼື ແກ້ໄຂຕາມການສະເໜີຂອງອົງການກວດກາລັດ ຂັ້ນເທິງ.

1.2. **ມາດຕາ 4** ວັກ 2 ໄດ້ກໍານົດວ່າ: ລັດ ຊຸກຍູ້, ສົ່ງເສີມແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ເຂົ້າຮ່ວມໃນວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໝາຍຄວາມວ່າ: ລັດຊຸກຍູ້, ສົ່ງເສີມບັນດາອົງການຈັດຕັ້ງດັ່ງກ່າວເຂົ້າຮ່ວມໃນການຕິດຕາມ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕໍ່ກັບບັນດາອົງການອໍານາດລັດ ໃນການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ, ທະຫານ , ຕໍາຫຼວດ ແລະ ພະນັກງານວິສາຫະກິດຂອງລັດ, ນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ປະຕິບັດໜ້າທີ່ ແຕ່ສູນກາງລົງຮອດທ້ອງຖິ່ນ ດ້ວຍວິທີການເຂົ້າຮ່ວມ ດັ່ງນີ້:

1. ອົງການກວດກາລັດແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂອໍານວຍຄວາມສະດວກ, ສ້າງແຜນການ ເພື່ອກໍານົດໃຫ້ແຕ່ລະການຈັດຕັ້ງ ແລະ ບຸກຄົນ ເຂົ້າມາລາຍງານສະພາບການປະຕິບັດໜ້າທີ່ວຽກງານໃນຄວາມຮັບຜິດຊອບຂອງ ຕົນເປັນແຕ່ລະເດືອນ ຕາມສະພາບຕົວຈິງ, ກໍລະນີ ມີຄວາມຈໍາເປັນ ແລະ ຮີບດ່ວນອາດຈະເຊີນພາກສ່ວນທີ່ກ່ຽວຂ້ອງ ເຂົ້າມາລາຍງານໂດຍກົງ ຫຼື ສ້າງແຜນການລົງກໍາສະພາບ, ຂໍ້ມູນນໍາພາກສ່ວນກ່ຽວຂ້ອງ ເປັນແຕ່ລະເປົ້າໝາຍ;
2. ເຂົ້າຮ່ວມກອງປະຊຸມວຽກງານກວດກາປະຈໍາປີ ຕາມການເຊີນ ຂອງອົງການກວດກາລັດແຕ່ລະຂັ້ນ ເພື່ອລາຍງານຜົນການຕິດຕາມ, ກວດກາ ແລະ ການແກ້ໄຂຜົນຂອງການກວດກາທີ່ໄດ້ປະຕິບັດຜ່ານມາ;
3. ເຂົ້າຮ່ວມຕິດຕາມ, ກວດກາໂດຍກົງ ຕາມການສະເໜີ ຫຼື ຕົກລົງ ຂອງອົງການກວດກາລັດ ແຕ່ລະຂັ້ນ ທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
4. ສະເໜີເຂົ້າພົບ ແລະ ລາຍງານໂດຍກົງເປັນລາຍລັກອັກສອນ ຫຼື ປາກເປົ່າ ກັບອົງການກວດກາລັດ ແຕ່ລະຂັ້ນ ທີ່ກ່ຽວຂ້ອງ;

5. ສົ່ງຄຳສະເໜີ ຫຼື ຄຳຮ້ອງຟ້ອງ (ຕາມມາດຕາ 29 ຂອງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ) ກ່ຽວກັບ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ມີການລະເມີດລະບຽບດ້ານບໍລິຫານ ຫຼື ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ໃຫ້ອົງການກວດກາລັດ ແຕ່ລະຂັ້ນໂດຍກົງ ຫຼື ຜ່ານທາງໄປສະນີ, ຕູ້ຮັບຈົດໝາຍ ທີ່ການຈັດຕັ້ງກວດກາລັດ ຫຼື ການຈັດຕັ້ງລັດ ໄດ້ຈັດວາງໄວ້ແຕ່ລະບ່ອນ;

6. ລາຍງານຜ່ານໂທລະສັບສາຍດ່ວນ ຕາມອົງການທີ່ກ່ຽວຂ້ອງໄດ້ກຳນົດໄວ້ ແລະ ດ້ວຍຮູບການອື່ນ;

7. ສຳລັບສື່ມວນຊົນ ນອກຈາກການເຂົ້າຮ່ວມຕິດຕາມ, ໂຄສະນາເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການຂອງລັດ ກ່ຽວກັບວຽກງານກວດກາແລ້ວ ຍັງຕ້ອງເຂົ້າຮ່ວມເກັບກຳຂ່າວ ແລະ ອອກຂ່າວການເຄື່ອນໄຫວຕ່າງໆ ຂອງອົງການກວດກາລັດ ຂັ້ນຂອງຕົນ ເປັນຕົ້ນການເກັບກຳຂ່າວ ແລະ ອອກຂ່າວ ກອງປະຊຸມສະຫຼຸບວຽກງານກວດກາ, ການຈັດສຳມະນາຕ່າງໆ, ການເປີດເຜີຍຜົນຂອງການກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ຕາມການຕົກລົງເຫັນດີຂອງຂັ້ນເທິງ ດ້ວຍຮູບການຕ່າງໆ ຕາມກົດໝາຍໄດ້ກຳນົດ.

## 2. ພາກທີ II ປະເພດ, ບ່ອນອີງ, ເນື້ອໃນ ແລະ ເປົ້າໝາຍຂອງການກວດກາລັດ

**2.1. ມາດຕາ 12** ບ່ອນອີງໃນການຕົກລົງກວດກາລັດ

ຂໍ້ 4 ການຕົກລົງກວດກາລັດ ໂດຍອີງໃສ່ຜົນຂອງການກວດສອບ ໝາຍຄວາມວ່າ: ການຈັດຕັ້ງປະຕິບັດຕົວຈິງ ຕ້ອງໄດ້ປະຕິບັດຕາມບົດບັນທຶກການປະສານງານ ລະຫວ່າງ ອົງການກວດກາລັດຖະບານ ກັບອົງການກວດສອບແຫ່ງລັດ ຫຼື ກົມກວດກາລັດຂອງບັນດາກະຊວງ-ອົງການ ກັບກົມກວດສອບອົງການຈັດຕັ້ງລັດ ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດ ຂັ້ນແຂວງກັບອົງການກວດສອບປະຈຳພາກ ທີ່ໄດ້ເຊັນບົດບັນທຶກຮ່ວມກັນແຕ່ລະໄລຍະ ໂດຍອີງໃສ່ ອົງການກວດສອບແຫ່ງລັດ ຫຼື ອົງການກວດສອບປະຈຳພາກ ໄດ້ສະໜອງຂໍ້ມູນ, ຫຼັກຖານທີ່ບໍ່ທັນແຈ້ງ ແລະ ຍັງບໍ່ຊັດທັນເຈນ ເພື່ອສະເໜີໃຫ້ອົງການກວດກາລັດຖະບານ ຫຼື ກົມກວດກາລັດຂອງບັນດາກະຊວງ-ອົງການ ແລະ ອົງການກວດກາລັດ ຂັ້ນແຂວງ ດຳເນີນການກວດກາ ແລະ ສະເໜີວິທີແກ້ໄຂຕາມກົດໝາຍທີ່ກ່ຽວຂ້ອງກຳນົດໄວ້.

ຂໍ້ 5 ການຕົກລົງກວດກາ ໂດຍອີງໃສ່ມະຕິຂອງສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ໝາຍຄວາມວ່າ: ກອງປະຊຸມສະພາແຫ່ງຊາດ ຫຼື ສະພາປະຊາຊົນ ຂັ້ນແຂວງ ໃນແຕ່ລະຄັ້ງ ໄດ້ພິຈາລະນາ ກ່ຽວກັບຜົນຂອງການກວດສອບທີ່ມີບາງບັນຫາບໍ່ທັນແຈ້ງ ຕິດພັນກັບການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ພະນັກງານ, ສະພາແຫ່ງຊາດ ຫຼື ສະພາປະຊາຊົນ ຂັ້ນແຂວງ ໄດ້ອອກມະຕິ ເພື່ອໃຫ້ອົງການກວດກາລັດຖະບານ ຫຼື ກົມກວດກາລັດຂັ້ນກະຊວງ ຫຼື ອົງການກວດກາລັດ ຂັ້ນແຂວງ ສືບຕໍ່ກວດກາຕາມຜົນຂອງການກວດສອບໂດຍລົງເລິກແຕ່ລະບັນຫາ ແລ້ວສະຫຼຸບລາຍງານຜົນຂອງການກວດກາຕາມຂັ້ນຕອນດັ່ງນີ້:

- ອົງການກວດກາລັດຖະບານ ລາຍງານຕໍ່ລັດຖະບານ ຫຼື ລາຍງານຕໍ່ກອງປະຊຸມນາຍົກ, ຮອງນາຍົກລັດຖະມົນຕີກ່ອນ ແລ້ວຈຶ່ງລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ;

- ກົມກວດກາກະຊວງ-ອົງການ ລາຍງານຕໍ່ຄະນະນຳ ກະຊວງ-ອົງການກ່ອນ ແລ້ວຈຶ່ງລາຍງານຕໍ່ອົງການກວດ ກາລັດຖະບານ;

- ອົງການກວດກາລັດ ຂັ້ນແຂວງ ລາຍງານຕໍ່ຄະນະນຳ ອົງການປົກຄອງ ຂັ້ນແຂວງກ່ອນ ແລ້ວຈຶ່ງລາຍຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**2.2. ມາດຕາ 14** ຂໍ້ 3 ກຳນົດ ເນື້ອໃນການກວດກາຕາມຜົນການກວດສອບ ຕາມການສະເໜີ ຂອງອົງ ການກວດສອບແຫ່ງລັດ, ຕາມມະຕິກອງປະຊຸມສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ການປະຕິບັດຕົວຈິງຈະໄດ້ດຳເນີນດັ່ງນີ້:

- ອົງການກວດກາລັດຖະບານ ໄດ້ຮັບການສະເໜີ ໃຫ້ດຳເນີນການກວດກາ ຈາກອົງການກວດສອບແຫ່ງລັດ ຫຼື ຕາມມະຕິກອງປະຊຸມສະພາແຫ່ງຊາດ, ອົງການກວດກາລັດຖະບານ ຕ້ອງໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງແຜນການດຳເນີນການກວດກາໂດຍກົງ. ກໍລະນີຫາກເຫັນວ່າມີການພົວພັນເຖິງຄວາມຮັບຜິດຊອບ ຂອງຂັ້ນກະຊວງ ແລະ ຂັ້ນແຂວງ ແມ່ນມອບໃຫ້ກົມກວດກາລັດ ຂັ້ນກະຊວງ ແລະ ອົງການກວດກາລັດ ຂັ້ນແຂວງ ເປັນຜູ້ດຳເນີນການກວດກາໂດຍກົງ ພາຍຫຼັງກວດກາສຳເລັດແລ້ວ ແມ່ນໃຫ້ລາຍງານຕໍ່ຂັ້ນກະຊວງ-ອົງການ ແລະ ຂັ້ນແຂວງຮັບຊາບ ພ້ອມກັນນັ້ນ ກໍ່ຕ້ອງສົ່ງບົດລາຍງານຜົນຂອງການກວດກາ ແຕ່ລະເປົ້າໝາຍໃຫ້ອົງການກວດກາລັດຖະບານ ເພື່ອຊາບ ແລະ ມີທິດຊີ້ນຳແກ້ໄຂ;

- ອົງການກວດກາລັດ ຂັ້ນແຂວງ ໄດ້ຮັບການສະເໜີໃຫ້ດຳເນີນການກວດກາ ຈາກອົງການກວດສອບປະຈຳພາກ ຫຼື ຕາມມະຕິ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແມ່ນມອບໃຫ້ອົງການກວດກາລັດ ຂັ້ນແຂວງ ເປັນຜູ້ດຳເນີນການກວດກາໂດຍກົງ.

ການດຳເນີນການກວດກາຕົວຈິງ ແມ່ນໃຫ້ປະຕິບັດຕາມບົດແນະນຳ ຂອງອົງການກວດກາລັດຖະບານ ສະ ບັບເລກທີ 36/ອກລ, ລົງວັນທີ 5 ກຸມພາ 2018 ກ່ຽວກັບການກວດກາ ຕາມຜົນການກວດສອບ ຫຼື ບົດແນະນຳອື່ນທີ່ກ່ຽວຂ້ອງ ທີ່ໄດ້ວາງອອກໃນແຕ່ລະໄລຍະ.

### 3. ພາກທີ III ການເຄື່ອນໄຫວກວດກາລັດ

**3.1 ມາດຕາ 20** ຂໍ້ 3 ໄດ້ກຳນົດວ່າ: ຜ່ານຮ່າງບົດສະຫຼຸບຜົນການກວດກາພາຍໃນຄະນະກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວ ໃຫ້ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ເພື່ອມີຄຳເຫັນ ແລະ ຢັ້ງຢືນຜົນຂອງການກວດກາ ຊ້າສຸດພາຍໃນກຳນົດ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ ໝາຍຄວາມວ່າ: ພາຍຫຼັງຫົວໜ້າ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ໄດ້ຮັບຮ່າງບົດສະຫຼຸບຜົນການກວດກາ ຈາກຄະນະກວດກາ ຫຼື ຄະນະກວດກາສະເພາະກິດແລ້ວຕ້ອງໄດ້ເປີດກອງປະຊຸມຄົ້ນຄວ້າເນື້ອໃນຂອງຮ່າງບົດສະຫຼຸບດັ່ງກ່າວ ເປັນໝູ່ຄະນະ, ມີປະຊາທິປະໄຕ ບັນຫາໃດທີ່ບໍ່ທັນແຈ້ງ, ຍັງບໍ່ຊັດເຈນ ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ຮຽກເຊີນຄະນະກວດກາ ຫຼື ຄະນະກວດກາສະເພາະກິດປະຊຸມຮ່ວມກັນ ເພື່ອມາຊີ້ແຈງກ່ຽວກັບບັນຫາທີ່ບໍ່ທັນແຈ້ງ, ບໍ່ທັນຊັດເຈນນັ້ນ ເພື່ອຄວາມເປັນເອກະພາບ ແລະ ພ້ອມກັນລົງລາຍເຊັນຢັ້ງຢືນໃສ່ບົດສະຫຼຸບຜົນຂອງການກວດກາ.

ກອງປະຊຸມ ຜ່ານຮ່າງບົດສະຫຼຸບຜົນຂອງການກວດກາ ພາຍໃນຄະນະນຳ ອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ແລະ ຜູ້ເຂົ້າຮ່ວມກອງປະຊຸມພ້ອມກັນລົງລາຍເຊັນໄວ້ ເພື່ອເປັນຫຼັກຖານຢັ້ງຢືນ. ສ່ວນຜູ້ເຊັນບົດສະຫຼຸບຜົນຂອງການກວດກາ ປະຕິບັດຄື:

ຕົວຢ່າງ: 1. ດຳເນີນການກວດກາ ຢູ່ພະແນກການໃດໜຶ່ງຂອງກົມວິຊາການໃດໜຶ່ງ ຜູ້ເຊັນບົດສະຫຼຸບຜົນຂອງການກວດກາ ຕ້ອງແມ່ນຫົວໜ້າພະແນກການ ຂອງເປົ້າໝາຍຖືກກວດການັ້ນ ເປັນຜູ້ເຊັນ; ກໍລະນີ ດຳເນີນການກວດກາກົມວິຊາການໃດໜຶ່ງຂອງກະຊວງໃດໜຶ່ງ ຜູ້ເຊັນບົດສະຫຼຸບຜົນຂອງການກວດກາ ແມ່ນຫົວໜ້າກົມ ຂອງເປົ້າໝາຍຖືກກວດກາ ຂອງກະຊວງນັ້ນ ເປັນຜູ້ເຊັນ ແລະ ຫົວໜ້າຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ທີ່ໄປດຳເນີນກວດກາ ກໍຕ້ອງໄດ້ເຊັນນຳກັນເພື່ອຢັ້ງຢືນຄວາມເປັນເອກະພາບ ແລະ ຖືກຕ້ອງ.

ຕົວຢ່າງ: 2. ດຳເນີນການກວດກາ ຢູ່ຂະແໜງການວິຊາສະເພາະໃດໜຶ່ງ ຂອງພະແນກການອ້ອມຂ້າງແຂວງໃດໜຶ່ງ ຜູ້ເຊັນບົດສະຫຼຸບຜົນຂອງການກວດກາ ຕ້ອງແມ່ນຫົວໜ້າຂະແໜງການ ຂອງເປົ້າໝາຍຖືກກວດການັ້ນເປັນຜູ້ເຊັນ; ກໍລະນີ ດຳເນີນການກວດກາ ພະແນກການອ້ອມຂ້າງແຂວງໃດໜຶ່ງ ຜູ້ເຊັນບົດສະຫຼຸບຜົນຂອງການກວດກາ ຕ້ອງແມ່ນ ຫົວໜ້າພະແນກການ ຂອງເປົ້າໝາຍຖືກກວດກາຂອງແຂວງນັ້ນ ເປັນຜູ້ເຊັນ ແລະ ຫົວໜ້າຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ທີ່ໄປດຳເນີນກວດກາ ກໍຕ້ອງໄດ້ເຊັນນຳກັນເພື່ອຢັ້ງຢືນຄວາມເປັນເອກະພາບ ແລະ ຖືກຕ້ອງ.

**3.2 ມາດຕາ 21** ການລາຍງານຜົນຂອງການກວດກາ ໝາຍຄວາມວ່າ: ພາຍຫຼັງຄະນະກວດກາດຳເນີນການກວດກາ ແລະ ສະຫຼຸບຜົນການກວດກາ ສຳເລັດແລ້ວ ຄະນະກວດກາຕ້ອງໄດ້ສ້າງບົດລາຍງານຜົນຂອງການກວດກາໂດຍໄວ (ການສ້າງບົດລາຍງານຜົນກວດກາ ແມ່ນນອນໃນກຳນົດເວລາດຳເນີນການກວດກາ) ໂດຍສັງລວມເອົາເນື້ອໃນທີ່ເປັນບັນຫາຕົ້ນຕໍ ຂອງບົດສະຫຼຸບຜົນຂອງການກວດກາ, ມີການຕີລາຄາທຽບໃສ່ກົດໝາຍ, ລະບຽບການຂອງລັດທີ່ກ່ຽວຂ້ອງ ແລະ ສະເໜີວິທີການແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງລັດ. ບົດລາຍງານຜົນຂອງການກວດກາ ຄັດຕິດກັບບົດສະຫຼຸບຜົນການກວດກາ ພ້ອມທັງເອກະສານຂໍ້ມູນ, ຫຼັກຖານທີ່ເກັບກຳ, ທ້ອນໂຮມໄດ້ຖ້າເຫັນວ່າມີຄວາມຈຳເປັນ. ກໍລະນີ ຂໍ້ມູນ, ຫຼັກຖານນັ້ນເປັນບັນຊີ ຫຼື ມີຕົວເລກເປັນຈຳນວນຫຼາຍ ຕ້ອງໄດ້ສ້າງເປັນຂໍ້ມູນສະຖິຕິ ເພື່ອສົ່ງໃຫ້ຜູ້ອອກຂໍ້ຕົກລົງກວດກາ, ຄະນະນຳ ຜູ້ທີ່ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າພິ ຈາລະນາຜົນຂອງການກວດກາ, ຮັບຮອງເອົາຜົນຂອງການກວດກາ ແລະ ວິທີການແກ້ໄຂຜົນຂອງການກວດກາຕາມກົດໝາຍ.

**3.3**. ມາດຕາ 23 ການພິຈາລະນາຜົນຂອງການກວດກາ ໝາຍຄວາມວ່າ: ພາຍຫຼັງຜູ້ອອກຂໍ້ຕົກລົງກວດກາໄດ້ຮັບບົດລາຍງານຈາກຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ຜູ້ອອກຂໍ້ຕົກລົງກວດກາຕ້ອງເປັນເຈົ້າການເປີດ ແລະ ເປັນປະທານກອງປະຊຸມຄົ້ນຄວ້າ, ພິຈາລະນາຜົນຂອງການກວດກາ ເປັນໝູ່ຄະນະ, ມີປະຊາທິປະໄຕໃນ ກອງປະຊຸມດັ່ງກ່າວ ໂດຍແມ່ນຫົວໜ້າ ແລະ ຮອງຫົວໜ້າຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເຂົ້າຮ່ວມເພື່ອລາຍງານ ແລະ ຊີ້ແຈ້ງບັນຫາຕ່າງໆ ກ່ຽວກັບເນື້ອໃນຜົນຂອງການກວດກາ ທີ່ກອງປະຊຸມໃຫ້ຄວາມສົນໃຈ. ຖ້າຈຳເປັນ ຫຼື ຕິດພັນກັບຫຼາຍພາກສ່ວນ ກໍໃຫ້ວິຊາການໃນຄະນະກວດກາ ຫຼື ຄະນະກວດກາສະເພາະ

ກິດ ແລະ ພາກ ສ່ວນກ່ຽວຂ້ອງເຂົ້າຮ່ວມນຳກໍໄດ້, ການຄົ້ນຄວ້າພິຈາລະນາຜົນຂອງການກວດກາ ນັ້ນ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາສູງສຸດບໍ່ເກີນ ຊາວວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບ ບົດລາຍງານຜົນຂອງການກວດກາ ເປັນຕົ້ນໄປ. ເມື່ອຄົ້ນຄວ້າພິຈາລະນາເປັນເອກະພາບແລ້ວ ຜູ້ ອອກຂໍ້ຕົກລົງກວດກາ ຕ້ອງອອກຂໍ້ຕົກລົງແກ້ໄຂຜົນການກວດກາ ຫຼື ສະເໜີຂັ້ນເທິງ ທີ່ມີສິດຄຸ້ມ ຄອງອອກຂໍ້ຕົກລົງແກ້ໄຂ ເພື່ອອອກຄຳສັ່ງ ຫຼື ແຈ້ງການ ໃຫ້ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍ ຖືກກວດກາ ແລະ ຜູ້ຖືກກວດກາ ຮັບຊາບພາຍໃນກຳນົດເວລາ ເຈັດວັນ ລັດຖະການ.

ໃນກໍລະນີ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາໄດ້ຕົກລົງ ແລະ ດຳເນີນການ ກວດກາຕາມຄວາມຮັບ ຜິດຊອບ ແລະ ສິດຄຸ້ມຄອງຂອງຂັ້ນຕົນ, ພາຍຫຼັງພິຈາລະນາຮັບຮອງເອົາ ຜົນຂອງການກວດກາ ແລະ ອອກຂໍ້ຕົກລົງແກ້ໄຂຜົນຂອງກວດກາແລ້ວ ຕ້ອງແຈ້ງຜົນການຕົກລົງ ໃຫ້ຜູ້ຖືກກວດກາຮັບຊາບ ພາຍໃນເວລາ ເຈັດວັນ ລັດຖະການ ເພື່ອຄົ້ນຄວ້າ, ກະກຽມແຜນຈັດຕັ້ງ ປະຕິບັດ.

**3.4 ມາດຕາ 24** ການແກ້ໄຂຜົນຂອງການກວດກາ.

ພາຍຫຼັງ ອົງການກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາໄດ້ຮັບຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງ ການ ກ່ຽວກັບການແກ້ໄຂຜົນຂອງການກວດກາແລ້ວ ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍຖືກ ກວດກາ ຕ້ອງຈັດຕັ້ງປະຕິບັດຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ດັ່ງກ່າວ ໃຫ້ເຂັ້ມງວດ, ເດັດຂາດ, ທັນການ ຄື: ຕ້ອງຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຊີ້ນຳຈັດຕັ້ງປະຕິບັດການແກ້ໄຂຜົນ ຂອງການກວດກາ, ຄະນະຮັບຜິດຊອບແກ້ໄຂຜົນຂອງການກວດກາຕ້ອງຄົ້ນຄວ້າຢ່າງເລິກເຊິ່ງ ຕໍ່ ກັບເນື້ອໃນຂໍ້ຕົກລົງແກ້ໄຂຜົນຂອງການກວດກາ, ສ້າງແຜນການດຳເນີນການແກ້ໄຂຕົວຈິງ, ຕ້ອງ ແກ້ໄຂໃຫ້ສຳເລັດ ແລະ ລາຍງານຜົນຂອງການແກ້ໄຂເປັນລາຍລັກອັກສອນ ໃຫ້ຜູ້ອອກຂໍ້ຕົກລົງແກ້ ໄຂຜົນການກວດກາຊາບພາຍ ໃນກຳນົດເວລາບໍ່ເກີນ ສາມສິບວັນ ລັດຖະການ  ນັບແຕ່ວັນໄດ້ຮັບ ຂໍ້ຕົກລົງແກ້ໄຂຜົນຂອງການກວດກາເປັນຕົ້ນໄປ.

ໃນກໍລະນີ ການຈັດຕັ້ງປະຕິບັດການແກ້ໄຂຜົນຂອງການກວດກາ ບໍ່ສຳເລັດພາຍໃນກຳນົດ ເວລາ ສາມສິບວັນ ລັດຖະການ ຍ້ອນສາເຫດໃດໜຶ່ງກໍຕ້ອງລາຍງານໃຫ້ຜູ້ອອກຂໍ້ຕົກລົງແກ້ໄຂຜົນ ຂອງການກວດກາຊາບ ແລະ ເພື່ອມີທິດຊີ້ນຳ.

ໃນກໍລະນີ ຜູ້ເປັນຫົວໜ້າ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ຫາກແກ້ໄຂຜົນຂອງ ການກວດກາ ບໍ່ຖືກຕ້ອງຕາມການຕົກລົງ ຫຼື ບໍ່ແກ້ໄຂຜົນຂອງການກວດກາ ຜູ້ເປັນຫົວໜ້າ ອົງ ການຈັດຕັ້ງ ຂອງເປົ້າໝາຍຖືກກວດກາຈະຖືກພິຈາລະນາວິໄນ ດ້ວຍຮູບການແຕ່ຂັ້ນກ່າວເຕືອນໄປ ເຖິງຂັ້ນດຳເນີນຄະດີຕາມກົດໝາຍ.

ວິທີການ, ຂັ້ນຕອນ ການຈັດຕັ້ງປະຕິບັດການລົງວິໄນ ແລະ ການດຳເນີນຄະດີ ຕໍ່ຫົວໜ້າ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ- ລັດຖະກອນ ທີ່ໄດ້ກຳນົດໄວ້ຢູ່ພາກທີ IV ໝວດທີ 1 ແລະ ໝວດທີ 2 ແລະ ກົດໝາຍທີ່ກ່ຽວຂ້ອງ.

**3.5 ມາດຕາ 25** ການຕິດຕາມ, ກວດກາ ການແກ້ໄຂຜົນຂອງການກວດກາຂອງອົງການ ບໍລິຫານລັດຂັ້ນໃດ ແມ່ນຄວາມຮັບຜິດຊອບຂອງອົງການກວດກາລັດ ຂັ້ນນັ້ນ ເປັນຜູ້ຕິດຕາມ, ຊຸກຍູ້ ແລະ ກວດກາ ຕາມການກຳນົດເວລາດັ່ງນີ້:

- ການຕິດຕາມ, ຊຸກຍູ້ການແກ້ໄຂຜົນຂອງການກວດກາ: ພາຍຫຼັງອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາໄດ້ຮັບຂໍ້ຕົກລົງແກ້ໄຂຜົນຂອງການກວດກາແລ້ວ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ຕ້ອງເປັນເຈົ້າການແກ້ໄຂໃຫ້ສຳເລັດ ແລະ ລາຍງານຜົນການແກ້ໄຂໃຫ້ຜູ້ອອກຂໍ້ຕົກລົງຊາບ ພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ຖ້າເຫັນວ່າອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ທີ່ບໍ່ແກ້ໄຂ ຫຼື ມີການແກ້ໄຂທີ່ເຫັນວ່າບໍ່ເໝາະສົມ ແລະ ບໍ່ໄດ້ລາຍງານຜົນຂອງການແກ້ໄຂນັ້ນ, ຜູ້ອອກຂໍ້ຕົກລົງແກ້ໄຂຜົນຂອງການກວດກາ ຕ້ອງອອກຂໍ້ຕົກລົງໃຫ້ອົງການກວດກາລັດຂັ້ນຕົ້ນດຳເນີນການຕິດຕາມ ແລະ ຊຸກຍູ້ ອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາສືບຕໍ່ແກ້ໄຂຜົນຂອງການກວດ ກາ ແຕ່ບໍ່ໃຫ້ເກີນພາຍໃນກຳນົດເວລາ ສາມສິບວັນ ລັດຖະການ;

- ການກວດກາ ການແກ້ໄຂຜົນຂອງການກວດກາ ແມ່ນການກວດກາຄວາມຮັບຜິດຊອບຂອງອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຫຼື ຜູ້ເປັນຫົວໜ້າ ຫາກບໍ່ແກ້ໄຂ ຫຼື ມີການແກ້ໄຂທີ່ເຫັນວ່າບໍ່ເໝາະສົມ ແມ່ນໃຫ້ດຳເນີນການກວດກາ ພາຍໃນກຳນົດເວລາບໍ່ເກີນ ສິບຫ້າວັນ ລັດຖະການ ນັບແຕ່ມື້ອອກຂໍ້ຕົກລົງໃຫ້ດຳເນີນການກວດກາ ການ ຈັດຕັ້ງປະຕິບັດການແກ້ໄຂຜົນຂອງການກວດກາ ເປັນຕົ້ນໄປ.

ວິທີການ, ຂັ້ນຕອນການຕິດຕາມ, ຊຸກຍູ້ ແລະ ການແກ້ໄຂຜົນຂອງການກວດກາ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດຂອງຄະນະກວດກາສູນກາງພັກ ເລກທີ 05/ຄກສພ, ລົງວັນທີ 05 ກຸມພາ 2018 ກ່ຽວກັບການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາ ຫຼື ຂໍ້ກຳນົດອື່ນທີ່ກ່ຽວຂ້ອງ ທີ່ໄດ້ວາງອອກໃນແຕ່ລະໄລຍະ (ກໍລະນີມີການປັບປຸງ ຫຼື ໄດ້ອອກຄຳແນະນຳໃໝ່).

**3.6 ມາດຕາ 26** ການເປີດເຜີຍຜົນ ຂອງການກວດກາ ທີ່ຖືກຮັບຮອງ ແລະ ໄດ້ຮັບອະນຸຍາດຈາກຜູ້ຕົກລົງໃຫ້ກວດກາ ສາມາດເປີດເຜີຍດ້ວຍຮູບການໃດໜຶ່ງຕາມຄວາມເໝາະສົມ ດັ່ງນີ້:

1. ແຈ້ງຂ່າວໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ໝາຍຄວາມວ່າ: ນອກຈາກແຈ້ງໃຫ້ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ ແລະ ເປົ້າໝາຍຖືກກວດກາແລ້ວ ຕ້ອງແຈ້ງໃຫ້ ອົງການຈັດຕັ້ງອື່ນທີ່ພົວພັນກັບເນື້ອໃນຂໍ້ຕົກລົງຜົນຂອງການກວດກາ ແລະ ອົງການກວດກາລັດ ຂັ້ນເທິງຂອງອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ເພື່ອຕິດ ຕາມ ແລະ ຊີ້ນຳ;

2. ແຈ້ງຜົນການກວດກາສູ່ສັງຄົມ ໝາຍຄວາມວ່າ: ແຈ້ງອອກຜ່ານສື່ສິ່ງພິມເຊັ່ນ: ໜັງສືພິມ, ວາລະສານ,ໃບຂ່າວສານ, ຈົດໝາຍເຫດ ແລະ ສື່ເອເລັກໂຕຣນິກ ເຊັ່ນ: ວິທະຍຸ, ໂທລະພາບ, ໂທລະໂຄ່ງ ແລະ ສື່ແບບໃໝ່ ຫຼື ລາຍການອິນເຕີເນັດແບບຕ່າງໆ;

3. ຮູບການອື່ນໆ ໝາຍຄວາມວ່າ: ຈັດກອງປະຊຸມແຈ້ງຜົນຂອງການກວດກາ ໂດຍມີຄະນະນຳ ອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ, ເປົ້າໝາຍຖືກກວດກາ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບອົງການຈັດຕັ້ງຂອງເປົ້າ ໝາຍຖືກກວດກາເຂົ້າຮ່ວມ; ແຈ້ງຂໍ້ຕົກລົງການແກ້ໄຂຜົນຂອງການກວດກາ ໂດຍຕິດໄວ້ກະດານຂ່າວ ຢູ່ສຳນັກງານຂອງອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ.

**4. ພາກທີ IV ອົງການກວດກາລັດ**

**4.1 ມາດຕາ 29** ຂໍ້ 2 ກຳນົດວ່າ: ໃນກໍລະນີຈຳເປັນ ກົມວິຊາການ ຫຼື ອົງການທຽບເທົ່າກົມທີ່ຂຶ້ນກັບຂັ້ນກະຊວງ ແລະ ຫ້ອງການຂັ້ນເມືອງ ອາດສ້າງຕັ້ງກົງຈັກກວດກາລັດຂຶ້ນກໍໄດ້ ໝາຍຄວາມວ່າ:

1. ກົມວິຊາການ ຫຼື ອົງການທຽບເທົ່າກົມທີ່ຂຶ້ນກັບຂັ້ນກະຊວງ.

- ກົມໃຫຍ່, ກົມ, ຫ້ອງການ, ກົມກອງ ແລະ ສະຖາບັນອື່ນໆ ທີ່ຂຶ້ນກັບຂັ້ນກະຊວງ ແລະ ທຽບເທົ່າ ທີ່ມີຄວາມຈຳເປັນຕ້ອງການຢາກສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນ ການຈັດຕັ້ງນັ້ນ ເປັນຜູ້ຄົ້ນ ຄວ້າແລ້ວນຳສະເໜີຕໍ່ລັດຖະມົນຕີ ຫຼື ຫົວໜ້າອົງການທຽບເທົ່າຂອງຕົນພິຈາລະນາ ເພື່ອສະເໜີຕໍ່ການຈັດຕັ້ງທີ່ກ່ຽວ ຂ້ອງຄົ້ນຄວ້າພິຈາລະນາ;

-ໃນກໍລະນີ ກົມໃຫຍ່, ກົມ, ຫ້ອງການ, ກົມກອງ ແລະ ສະຖາບັນອື່ນໆ ທີ່ໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນໃນໄລຍະຜ່ານມາແລ້ວ ກໍໃຫ້ຮັກສາໄວ້ຄືເກົ່າ;

ພາລະບົດບາດ, ສິດ ແລະ ໜ້າທີ່ ພະແນກກວດກາລັດ ຫຼື ຫ້ອງການກວດກາລັດນັ້ນ ແມ່ນໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໂດຍມອບໃຫ້ກົມກວດກາລັດຂັ້ນກະຊວງນັ້ນ ເປັນຜູ້ຄົ້ນ ຄວ້າ ແລ້ວສະເໜີຕໍ່ລັດຖະມົນຕີເປັນຜູ້ຕົກລົງ;

- ກົມໃຫຍ່, ກົມ, ຫ້ອງການ, ກົມກອງ ແລະ ສະຖາບັນອື່ນໆ ທີ່ຂຶ້ນກັບກະຊວງ-ອົງການໃດ ທີ່ບໍ່ໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນ ແມ່ນກົມກວດກາລັດ ຂອງກະຊວງ-ອົງການນັ້ນ ເປັນຜູ້ຮັບ ຜິດຊອບໃນການຕິດຕາມ, ກວດກາໂດຍກົງ.

2. ຫ້ອງການຂັ້ນເມືອງ.

- ການສ້າງຕັ້ງໜ່ວຍງານກວດກາລັດ ຂອງບັນດາຫ້ອງການ ຂັ້ນເມືອງ ທີ່ມີຄວາມຈຳເປັນຕ້ອງການຢາກສ້າງ ຕັ້ງຂຶ້ນໃໝ່ນັ້ນ ແມ່ນມອບໃຫ້ຫ້ອງການ ຂັ້ນເມືອງນັ້ນ ເປັນຜູ້ຄົ້ນຄວ້າແລ້ວນຳສະເໜີ ຕໍ່ພະແນກການຕາມສາຍຕັ້ງຂັ້ນ ແຂວງ, ອົງການກວດກາລັດ ຂັ້ນເມືອງ ແລະ ຫ້ອງການພາຍໃນ ຂັ້ນເມືອງ ພິຈາລະນາ ເພື່ອສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນອະນຸມັດສ້າງຕັ້ງຕາມກົດໝາຍ.

- ໃນກໍລະນີ ຫ້ອງການໃດໄດ້ສ້າງຕັ້ງຂຶ້ນແລ້ວ ແມ່ນໃຫ້ຮັກສາໄວ້ຄືເກົ່າ

ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງໜ່ວຍງານກວດກາລັດ ຂອງບັນດາຫ້ອງການ ຂັ້ນເມືອງ ແມ່ນໃຫ້ປະ ຕິບັດຕາມກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໂດຍມອບໃຫ້ຂະແໜງກວດກາລັດ ຕາມສາຍຕັ້ງຂັ້ນແຂວງນັ້ນ ເປັນຜູ້ຄົ້ນຄວ້າ ແລ້ວສະເໜີຕໍ່ຫົວໜ້າພະແນກການ ຂັ້ນແຂວງເປັນຜູ້ຕົກລົງ.

- ບັນດາຫ້ອງການອ້ອມຂ້າງເມືອງ, ເທດສະບານ, ນະຄອນໃດ ທີ່ບໍ່ໄດ້ສ້າງຕັ້ງໜ່ວຍງານກວດກາລັດຂຶ້ນແມ່ນອົງການກວດກາລັດເມືອງ, ເທດສະບານ, ນະຄອນນັ້ນ ແລະ ຂະແໜງກວດກາລັດ ຂອງພະແນກການຂັ້ນແຂວງ ຕາມຂະແໜງການສາຍຕັ້ງ ເປັນຜູ້ຮັບຜິດຊອບໃນການຕິດຕາມ, ກວດກາໂດຍກົງ.

3. ສຳລັບການສ້າງຕັ້ງໜ່ວຍງານກວດກາລັດຂັ້ນບ້ານ ຕາມທີ່ໄດ້ກຳນົດໃນບົດແນະນຳ ເລກທີ 192 ຂອງຄະ ນະກວດກາສູນກາງພັກ, ລົງວັນທີ 26 ມິຖຸນາ 2017 ທີ່ບໍ່ສອດຄ່ອງກັບກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ແມ່ນຖືກລົບລ້າງ.

4. ກົງຈັກການຈັດຕັ້ງ ຂອງກົມກວດກາລັດ ຂັ້ນກະຊວງ, ອົງການກວດກາລັດ ຂັ້ນແຂວງ, ຂັ້ນເມືອງ, ພະແນກການ ຂັ້ນແຂວງ ໃຫ້ປະຕິບັດຕາມບົດແນະນຳ ຂອງຄະນະກວດກາສູນກາງພັກ ເລກທີ 192/ຄກສພ, ລົງວັນທີ 26 ມິຖຸນາ 2017.

**4.2. ມາດຕາ 31** ຂໍ້ທີ 12, **ມາດຕາ 36** ຂໍ້ 10, **ມາດຕາ 41** ຂໍ້ 10, **ມາດຕາ 46** ຂໍ້ 9 ສ່ວນລາຍລະອຽດ ຂັ້ນຕອນ, ວິທີການ ດຳເນີນການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ ແມ່ນໃຫ້ປະຕິບັດຕາມບົດແນະນຳ ຂອງອົງການກວດກາລັດຖະບານ ກ່ຽວກັບການດຳເນີນຄະດີການສໍ້ລາດບັງຫຼວງ ສະບັບເລກທີ 27/ອກລ, ລົງວັນທີ 30 ມັງກອນ 2018 ຫຼື ນິຕິກຳອື່ນ ກ່ຽວກັບບັນຫາດັ່ງກ່າວທີ່ວາງອອກ ໃນແຕ່ລະໄລຍະ.

**4.3.** ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການກວດກາລັດ ຂັ້ນແຂວງ ແມ່ນໃຫ້ອົງການກວດກາລັດ ຂັ້ນແຂວງ ຄົ້ນຄວ້າສ້າງຂຶ້ນໂດຍອີງໃສ່ມາດຕາ 35, 36 ແລະ 37 ຂອງກົດໝາຍວ່າດ້ວຍການກວດກາລັດ (ສະ ບັບປັບປຸງ) ແລ້ວນຳສະເໜີຕໍ່ອົງການກວດກາລັດຖະບານພິຈາລະນາ ແລະ ອະນຸມັດ.

**4.4.** ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການກວດກາລັດ ຂັ້ນເມືອງ ແລະ ໜ່ວຍງານກວດກາລັດ ຂອງຫ້ອງການອ້ອມຂ້າງຂັ້ນເມືອງ ແມ່ນໃຫ້ອົງການກວດກາລັດ ຂັ້ນເມືອງ ຄົ້ນຄວ້າສ້າງຂຶ້ນໂດຍອີງໃສ່ມາດຕາ 40, 41 ແລະ 42 ຂອງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ແລ້ວນຳສະເໜີຕໍ່ອົງການກວດກາລັດຂັ້ນແຂວງ ພິຈາລະນາ ແລະ ອະນຸມັດ.

**5. ພາກທີ VIII ວັນສ້າງຕັ້ງ, ງົບປະມານ, ເຄື່ອງແບບ, ກາໝາຍ, ບັດກວດກາ ແລະ ຕາປະທັບ**

**ມາດຕາ 70** ວັກທີ ສອງ ໄດ້ກຳນົດວ່າ: ງົບປະມານຂອງອົງການກວດກາລັດ ຂັ້ນໃດແມ່ນຂຶ້ນກັບງົບປະມານຂອງອົງການບໍລິຫານລັດ ຂັ້ນນັ້ນ. ໃນນັ້ນ, ນອກຈາກມີງົບປະມານປົກກະຕິແລ້ວ ໃຫ້ມີງົບປະມານສະເພາະສຳລັບການກວດກາຕາມຄຳສັ່ງ, ກວດກາຕາມຜົນການກວດສອບ ໝາຍຄວາມວ່າ: ການສ້າງແຜນລາຍຈ່າຍງົບປະມານປະ ຈຳແຕ່ລະປີແມ່ນຕ້ອງໄດ້ສ້າງແຜນລາຍຈ່າຍງົບປະມານໃຫ້ຄົບຖ້ວນເຊັ່ນ ລາຍຈ່າຍບໍລິຫານປົກກະຕິ, ລາຍຈ່າຍໄປວຽກທາງການ ແລະ ລາຍຈ່າຍການເຄື່ອນໄຫວພິເສດ (ການກວດກາຕາມຄຳສັ່ງ, ຄຳຮ້ອງ, ຄຳສະເໜີ, ຕາມຜົນການກວດສອບ ຫຼື ຕາມມະຕິຂອງສະພາ) ບົນພື້ນຖານການສ້າງແຜນລາຍຈ່າຍງົບປະມານປະຈຳແຕ່ລະປີ ໃຫ້ອີງໃສ່ປຶ້ມຄູ່ມືການບັນຊີຂອງອົງການຈັດຕັ້ງລັດ ທີ່ກະຊວງການເງິນໄດ້ວາງອອກແຕ່ລະໄລຍະ

- ໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ທ້ອງຖິ່ນ ເພີ່ມງົບປະມານໃຫ້ອົງການກວດກາລັດ ແຕ່ລະຂັ້ນ ເພື່ອໃຫ້ສາມາດປະຕິບັດວຽກງານກວດກາໃຫ້ໄດ້ຮັບຜົນສຳເລັດຕາມທີ່ໄດ້ກຳນົດໄວ້ ໃນມະຕິກອງປະ ຊຸມຂອງສະພາແຫ່ງຊາດ ເລກທີ 074/ສພຊ, ລົງວັນທີ 17 ພະຈິກ 2017 ມາດຕາ 5.3.
- ເຄື່ອງແບບ, ກາໝາຍ, ບັດກວດກາ ແມ່ນໃຫ້ປະຕິບັດຕາມ ຂໍ້ກຳນົດ ຂອງອົງການກວດກາລັດຖະບານ ສະບັບເລກທີ 174/ອກລ, ລົງວັນທີ 23 ຕຸລາ 2013 ກ່ຽວການຄຸ້ມຄອງ ແລະ ນຳໃຊ້ເຄື່ອງແບບ, ກາໝາຍ ແລະ ບັດກວດກາ.

- ບັດກວດກາ ຂອງອົງການກວດກາລັດແຕ່ລະຂັ້ນ ແມ່ນໃຫ້ປະຕິບັດຕາມບົດແນະນໍາ ຂອງ ອົງການກວດກາລັດຖະບານ ສະບັບເລກທີ 81/ອກລ, ລົງວັນທີ 4 ມີນາ2016 ກ່ຽວກັບລະບຽບ ການຄຸ້ມຄອງ ແລະ ນໍາໃຊ້ບັດກວດກາ.

## III. ການຈັດຕັ້ງປະຕິບັດ

1. ຄະນະນໍາ ກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການກວດກາລັດແຕ່ ລະຂັ້ນ ຕ້ອງຄົ້ນ ຄວ້າເຊື່ອມຊຶມ, ກໍາແໜ້ນ, ຈັດຕັ້ງເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ປະຊາຊົນ, ພົນລະເມືອງເວົ້າລວມ, ເວົ້າສະເພາະພະນັກງານກວດກາລັດແຕ່ລະຂັ້ນຮັບຮູ້- ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຄໍາແນະນໍາ ສະບັບນີ້ ຢ່າງເຂັ້ມງວດ.

2. ຜ່ານການຈັດຕັ້ງປະຕິບັດຄໍາແນະນໍາ ສະບັບນີ້ ຖ້າມີຄວາມຫຍຸ້ງຍາກ ໃຫ້ລາຍງານ ອົງການກວດກາລັດຖະ ບານ ເພື່ອຊີ້ນໍາ, ປັບປຸງ ແລະ ແກ້ໄຂໃຫ້ທັນເວລາ.

**ປະທານ**

**ອົງການກວດກາລັດຖະບານ**